ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 082 /ທຄຕລ 2021

ນະຄອນຫຼວງວຽງຈັນ, ວັນທີ: 21 SEP 2021

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍຕູ້ຖອນເງິນ ATM ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາຕູ້ຖອນເງິນ ATM ຈຳນວນ 10 ໜ່ວຍ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍຕູ້ຖອນເງິນ ATM ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນເຄື່ອງ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ/ດ | ລາຍການ |
|---|---|
| 1. | NCR SELFSERV 28 AUTOMATED TELLER MACHINE, FULL WHEATHERIZED CASH DISPENSER - LOBBY MODEL Country of origin: Hungarry, India or China<br>**Main System**<br>NCR SelfServ 28 Automated Teller Machine<br>Full Wheatherized Cash Dispenser - Lobby Model<br>Safe Door Cover - Front Access<br>USB architecture<br>Self-Healing technology<br>Bunch Cash Presenter/S2 Dispenser<br>Vacumm Pick Technology Dispenser (For higher reliability against humidity)<br>Standard 4 Currency Cassettes and LatchFast PurgeBin<br>Motorised Card Reader Track 1/2/3 with SmartCard support<br>EMV Compliance<br>Support Multiple Card Standards:<br>- Magnetic Stripe: ISO 7810, 7811-1/2/3/4/5, ISO 7812, ISO 7813, ISO 4909<br><br>- IC Cards - CP8 and ISO 7816-1/2/3, ISO 7813<br>- Card Return on Power Failure/System Error<br>Card Capture Bin<br>Media Entry & Exit Indicators<br>15" Color LCD TouchScreen<br>Ruggedized tactile 16 key keyboard<br>Display Privacy Filter<br>Intel Core i5 GHz Processor<br>8 GB RAM<br>1TB HardDisk Storage<br>DVD Drive<br>10/100 Ethernet Interface<br>Multimedia Onboard Audio with Speaker<br>Graphic Thermal Receipt Printer<br>Electronic Journal<br>Optional Thermal Journal Printer<br>Operator Interface control board |
| | **Security**<br>High Secure Enhanced Encryption Pinpad- Pin Guard Included<br>TripleDES Hardware Encryptor - PCI Compliance |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | |
|---|---|
| | Comply with ANSI x 9.24 and ISO 9564-1 definitions of a "Physically Secure Device"<br>Capable of erasing cryptographic keys when penetrated by an attacker.<br>Capable of executing the Triple DES algorithm internally<br>Comply with ISO standard for physical built<br>- ISO 9564-1<br>- ISO 13491-1<br>- ISO 13491-2 |
| | **Card Reader**<br>Flaudulent Device Inhibitor (FDI) included (prevent attachement of skimming devices)<br><br>Card Reader ECD feature (jitter) for anti-card-skimming (work on both card insert & eject)<br><br>Beep before or after card eject<br>Primary Combination Lock with Keylock<br>Secondary Combination Lock<br>Industrial Standard CEN 1 Safe<br>Security Solidcore Software included with the following features<br>Sign all authorized running software and process in side ATM<br>Protecting good code from being tampered-with or hijacked<br>Stop any kind of Virus, Worm, Trojan, Spyware<br>Stop any kind of Zero-day attachs, Buffer overflows, code injection, application exploits<br>**Weatherised Enclosure, supporting (Extreme Environment):**<br>Raining weather<br>Hot weather (as high as +50 degree)<br>Cold weather (as low as -20 degree)<br>Windy weather<br>**OS & Applications Development Environment**<br>Microsoft Windows 10 platform<br>ATM Application supports existing ATM Functions<br>License & Support ISO 8583 standard<br>Compatible with Aptra XFS Platform<br>Compatible with Aptra Advance Application<br>Compatible with APTRA Promote for Bank & Third Party Advertisement Campaign<br><br>Compatible with APTRA Relate for targeted and personalized banking |
| | NCR **Skimming Protection Solution (SPS)**<br>**Features**<br>Anti-skimming protection<br>- Multiple random noise generators<br>- New design to focus the jamming at the potential point of compromise"<br>**Self-protection**<br>- Integrated diagnostics and state-of-health monitoring<br>**Configurability**<br>- Choose either the recommended settings or configure to address a unique environment or future threats<br>**Scalability**<br>- Industry standard bus architecture allows for fast response to new threats and reduced development and certification cycles<br>- FPGA architecture – hardware can be repurposed via downloadable software |
| | **ATM Pinhole Surveilance Camera/USB interface**<br>Image sensor: 1/4" Progressive Scan Color CCD<br>Effective Pixels: 659 (H) x 494 (V)<br>Scanning system: Progressive Scan<br>Video output: VGA(640X480), CiF(352X288), SiF(320X240), QSiF, (176X144,), QCiF(160x120)<br>Min. Illumination: 1 Lux |

| | |
|---|---|
| | Exposure: Auto / Manual(Shutter Speed & AGC Control)<br>White Balance: Auto / Fixed / Indoor / Initial / Outdoor<br>Picture: Brightness / Contrast / Gamma / Saturation<br>Lens/Standard: 2.97mm lens/2.5mm Pinholes<br>Interface Type: USB |
| | **ATM CashSlot Camera/USB interface**<br>Camera Software Function (stand-alone)<br>Capturing images with transaction info<br>Images can be captures witch different transaction steps<br>Number of images captured configurable<br>Images resolution configurable<br>Images viewer and finder (base on transaction) on ATM |
| ❖ | **ລາຍລະອຽດໜ້າວຽກ** |
| | - ບໍລິສັດຈະເປັນຜູ້ຮັບຜິດຊອບກວດເຊັກ, ຕິດຕັ້ງລະບົບ ແລະ ທົດລອງຕູ້ໃໝ່ໃຫ້ເຂົ້າກັບລະ ບົບຂອງ ທຄຕລ ເຊັ່ນ: ກວດລະຫັດ, ກວດຍອດເງິນ, ກວດ Bank information, Fund transfer.<br>- ບໍລິສັດຈະຮັບຜິດຊອບຕິດຕັ້ງກ້ອງຖ່າຍຮູບໃສ່ຕູ້ ATM ໜ່ວຍໃໝ່ ຈຳນວນ 10 ໜ່ວຍ. |

**ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **ເອກະສານຊອງທີ 1 (ບໍ່ປິດຊອງ).**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງດັ່ງກ່າວ, ຕ້ອງມີວິຊາການສະເພາະດ້ານ ແລະ ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2020, ໃບອະນຸຍາດດຳເນີນທຸລະກິດປີ 2021 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ).
2. ລະບຸຍີ່ຫໍ້, ປີຜະລິດສິນຄ້າ ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງຕູ້ ATM ໃຫ້ພາກສ່ວນອື່ນ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບໃນ **ວັນສຸກ, ວັນທີ 08/10/2021 ເວລາ 11:00 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

❖ **ເອກະສານຊອງທີ 2 (ປິດຊອງ).**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. **ໃນວັນສຸກ** ວັນທີ **15/10/2021 ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນ ແຈ້ງໃຫ້ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດລຸ້ນ, ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 15/10/2021)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

**ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

**ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ແລະ ຕິດຕັ້ງສຳເລັດ.
- **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄໍ້າປະກັນຄຸນະພາບສິນຄ້າ 06 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍ ບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ທະນາຄານ ການຄ້າຕ່າງປະເທດລາວມະຫາຊົນ**
**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

ສອບຖາມລາຍລະອຽດເພີ່ມເຕີມ:
(ສຳລັບສອບຖາມສະເປັກ) ທ່ານ ສົມຍາໄຊ ພົມຍາວົງ ເບີໂທ: +856 20 22 224 446

- E-mail: bidcommittee@bcel.com.la

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………/ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | (ໃຫ້ລະບຸລະອຽດ) | ປະເທດ....... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: